ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງພະລັງງານ ແລະ ບໍ່ແຮ່
ລັດວິສາຫະກິດໄຟຟ້າລາວ

ເລກທີ: 1278 /ຟຟລ
ນະຄອນຫລວງວຽງຈັນ, ວັທີ 09 JUN 2021

# ໜັງສືເຊີນເຂົ້າຮ່ວມປະມູນ

1. ລັດວິສາຫະກິດໄຟຟ້າລາວ (ສໍານັກງານໃຫຍ່) ໄດ້ນໍາໃຊ້ຮ່ວງເງິນແຜນງົບປະມານ ແລະ ການລົງທຶນ ປີ 2021 ຂອງ ຟຟລ ເພື່ອດໍາເນີນການ ຈັດພິມປະຕິທິນ ຟຟລ 2022.
2. ລັດວິສາຫະກິດໄຟຟ້າລາວ ຂໍຖືເປັນກຽດເຊີນບັນດາໂຮງພິມ ແລະ ບໍລິສັດທີ່ສົນໃຈ ເຂົ້າຮ່ວມປະມູນ ຈັດພິມປະຕິທິນ ຟຟລ 2022 ໄລຍະສົ່ງສິນຄ້າທັງໝົດແມ່ນ 90 ວັນ.
3. ການປະມູນນີ້ຈະດໍາເນີນຕາມຂັ້ນຕອນການປະມູນເປີດກວ້າງພາຍໃນ ທີ່ໄດ້ກໍານົດໃວ້ຢູ່ໃນກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງ ສະບັບເລກທີ: 30/ສພຊ, ລົງວັນທີ: 2 ພະຈິກ 2017. ແລະ ເອກະສານ ຄໍາແນະນໍາການໃຊ້ກົດໝາຍ ສະບັບ ເລກທີ: 0477/ກງ, ລົງວັນທີ: 13 ກຸມພາ 2019, ຄໍາແນະນໍາເພີ້ມເຕີມສໍາລັບ ມາດຕາ 23 ແລະ ມາດຕາ 31 ຂອງຄໍາແນະນໍາການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງດ້ວຍທຶນຂອງລັດ, ສະບັບເລກທີ: 1995/ກງ, ລົງວັນທີ: 24 ມິຖຸນາ 2019.
4. ຜູ້ປະມູນຕ້ອງມີສໍາເນົາເອກະສານໃບອະນຸຍາດດໍາເນີນທຸລະກິດຖືກຕ້ອງຕາມກົດໝາຍ ແລະ ໃບມອບພັນທະອາກອນປີ 2020 ທີ່ນໍາໃຊ້ໄດ້ເຖິງວັນທີ 31/12/2021 ແລະ ຖືກຕ້ອງຕາມກົດໝາຍ (ຫລື ເອກະສານຢັ້ງຢືນຈາກອົງການທີ່ກ່ຽວຂ້ອງດັ່ງກ່າວ).
5. ບໍລິສັດໃດທີ່ຄວາມສົນໃຈ ຕ້ອງການຊື້ເອກະສານປະມູນ ສາມາດຕິດຕໍ່ພົວພັນໄດ້ ທີ່ລັດວິສາຫະກິດໄຟຟ້າລາວ (ສໍານັກງານໃຫຍ່), ຖະໜົນມິດຕະພາບລາວ-ໄທ, ຕູ້ ປ.ນ 309, ບ້ານ ທົ່ງກາງ, ເມືອງ ສີສັດຕະນາກ, ນະຄອນຫລວງວຽງຈັນ. ໂທ: (856-21) 316094-1614, ພະແນກຈັດຊື້, ຝ່າຍແຜນການ-ການເງິນ (ຊັ້ນ 6) ໃນໂມງລັດຖະການເລີ່ມແຕ່ວັນທີ: 11../06/2021 ເປັນຕົ້ນໄປ, ໃນລາຄາ 500.000 ກີບ/ຊອງ ຈໍານວນເງິນດັ່ງກ່າວຈະບໍ່ມີການສົ່ງຄືນ (ວິທີການຊໍາລະຕ້ອງຈ່າຍເປັນເງິນສົດ).
6. ຊອງປະມູນຕ້ອງສົ່ງກ່ອນເວລາ 11:00 ໂມງ ຂອງວັນທີ:..20.../06/2021 ທີ່ຫ້ອງປະຊຸມໃຫຍ່ ຊັ້ນ 1. ສໍານັກງານໃຫຍ່. ຊອງປະມູນໃດສົ່ງຊ້າກວ່າເວລາທີ່ໄດ້ກໍານົດໃວ້ຈະບໍ່ຮັບເອົາ ແລະ ຈະສົ່ງຄືນໂດຍບໍ່ມີການເປີດຊອງ, ຊອງປະມູນທຸກໆ ຊອງໄດ້ເປີດໃນເວລາດຽວກັນໂດຍຊ້ອງໜ້າຄະນະກໍາມະການຈັດຊື້ ແລະ ຕົວແທນຂອງຜູ້ເຂົ້າຮ່ວມແຂ່ງ ຂັນປະມູນທີ່ສົນໃຈເຂົ້າຮ່ວມນໍາ.
7. ຜູ້ປະມູນຕ້ອງມີເງິນຄໍ້າປະກັນຊອງປະມູນ: 2% ຂອງມູນຄ່າທີ່ສະເໜີໃນການປະມູນ (ເປັນໜັງສືຄໍ້າປະກັນຈາກທະນາຄານ, ແຊັກວິຊ່າ ຫຼື ເງິນສົດ ທີ່ນໍາໃຊ້ເຖິງ ວັນທີ:.20./..9../2021).

ຜູ້ອໍານວຍການໃຫຍ່

ກະຊວງພະລັງງານ ແລະ ບໍ່ແຮ່ ລັດວິສາຫະກິດ ໄຟຟ້າລາວ EDL ນະຄອນຫລວງວຽງຈັນ

ຈັນທະບູນ ສຸກອາລຸນ
ຜູ້ອໍານວຍການໃຫຍ່